**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ເຈົ້າແຂວງ ເລກທີ..351.../ຈຂ
ຫຼວງນໍ້າທາ, ວັນທີ.02..ເມສາ...2024

# ຂໍ້ຕົກລົງ
## ວ່າດ້ວຍການຄຸ້ມຄອງການຈັດງານ ແລະ ບຸນປະເພນີ ພາຍໃນແຂວງຫຼວງນໍ້າທາ

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍການສ້າງນິຕິກຳ (ສະບັບປັບປຸງ) ສະບັບເລກທີ 06/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ດຳລັດວ່າດ້ວຍການປະຢັດ ແລະ ຕ້ານການຟູມເຟືອຍສະບັບເລກທີ 205/ລບ, ລົງວັນທີ 22 ກໍລະກົດ 2022;
- ອີງຕາມ ມະຕິກອງປະຊຸມສະພາປະຊາຊົນແຂວງ ຫຼວງນໍ້າທາ ຊຸດທີ II ຄັ້ງທີ 6 ວ່າດ້ວຍການຮັບຮອງເອົາ ຂໍ້ຕົກລົງເຈົ້າແຂວງ ວ່າດ້ວຍການຄຸ້ມຄອງການຈັດງານ ແລະ ບຸນປະເພນີ ພາຍໃນແຂວງຫຼວງນໍ້າທາ ສະບັບເລກທີ 11/ສພຂ, ລົງວັນທີ 14 ມີນາ 2024;

ເພື່ອເຮັດໃຫ້ການຄຸ້ມຄອງການຈັດງານ ແລະ ບຸນປະເພນີຕ່າງໆພາຍໃນແຂວງຫຼວງນໍ້າທາ ມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ, ກະທັດຮັດ, ຫຼຸດຜ່ອນປະກົດການຫຍໍ້ທໍ້, ສັງຄົມຫັນໄປສູ່ການປະຢັດມັດທະຢັດ ແລະ ຕ້ານການຟູມເຟືອຍ ເທື່ອລະກ້າວ.

## ເຈົ້າແຂວງຫຼວງນໍ້າທາ ຕົກລົງ:
## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດຫຼັກການ, ລະບຽບການ ແລະ ມາດຕະການເພື່ອຄຸ້ມຄອງ, ຕິດຕາມກວດກາ ການຈັດງານຢູ່ພາຍໃນແຂວງຫຼວງນໍ້າທາ ແລະ ແນໃສ່ປົກປັກຮັກສາ ແລະ ເສີມຂະຫຍາຍມູນເຊື້ອວັດທະນະທຳຮີດຄອງປະເພນີອັນດີງາມຂອງຊາດ, ຂອງບັນດາເຜົ່າ, ສັງຄົມມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ, ຫັນເຂົ້າສູ່ການປະຢັດມັດທະຢັດ, ຕ້ານການຟູມເຟືອຍ, ຫຼຸດຜ່ອນປະກົດການຫຍໍ້ທໍ້ໃນສັງຄົມ ເຮັດໃຫ້ການພັດທະນາເສດຖະກິດ-ສັງຄົມມີຄວາມຍືນຍົງ ແລະ ທັງເປັນການດັດປັບໃຫ້ສາຍພົວພັນ

ສັງຄົມມີຄວາມເປັນເອກະພາບ ແລະ ເທົ່າທຽມກັນໃນການຈັດງານ ແລະ ປະເພນີຕ່າງໆ ໃຫ້ໄດ້ຮັບການພັດທະນາທີ່ດີຂຶ້ນ.

**ມາດຕາ 2 ການຄຸ້ມຄອງການຈັດງານ ແລະ ບຸນປະເພນີ**

ແມ່ນການກໍານົດຮູບແບບ, ວິທີການ, ມາດຕະການໃນການຈັດງານ ແລະ ບຸນປະເພນີຕ່າງໆ ໃຫ້ປະຕິບັດຖືກຕ້ອງຕາມຮີດຄອງປະເພນີອັນດີງາມທີ່ສືບທອດກັນມາໃຫ້ມີລັກສະນະກ້າວໜ້າ, ວິທະຍາສາດ ສອດຄ່ອງກັບກົດໝາຍ ແລະ ລະບຽບການ.

**ມາດຕາ 3 ການອະທິບາຍຄໍາສັບ**

ຄໍາສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍ ດັ່ງນີ້:

1. **ການຈັດງານ** ໝາຍເຖິງການຈັດກິດຈະກໍາໃດໜຶ່ງ ທີ່ອີງການຈັດຕັ້ງລັດ, ບຸກຄົນ, ນິຕິບຸກຄົນ ຈັດຂຶ້ນເພື່ອເຕົ້າໂຮມຄວາມສາມັກຄີ, ການມ່ວນຊື່ນ, ບອກກ່າວ, ແຈ້ງຂ່າວ ຫຼື ຄົບຮອບຕາມຈຸດປະສົງເຈົ້າຂອງງານ ແລະ ຮີດຄອງປະເພນີ;
2. **ບຸນປະເພນີ** ໝາຍເຖິງງານເທດສະການ, ງານບຸນຕາມຮີດຄອງປະເພນີຂອງປະຊາຊົນບັນດາເຜົ່າ ທີ່ເຄີຍປະຕິບັດສືບທອດກັນມາ;
3. **ງານແຕ່ງດອງ** ໝາຍເຖິງພິທີການຢັ້ງຢືນໃຫ້ຄູ່ບ່າວສາວໄດ້ຈົດທະບຽນສ້າງຄອບຄົວໃໝ່ ເປັນຜົວເມຍກັນຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
4. **ງານບາສີສູ່ຂວັນ** ໝາຍເຖິງພິທີສູ່ຂວັນ, ມັດແຂນ ແລະ ອວຍພອນເຊິ່ງກັນ ແລະ ກັນ ໃຫ້ມີຄວາມເບີກບານທາງຈິດໃຈ, ຈະເລີນ ແລະ ເປັນສິລິມຸງຄຸນ;
5. **ງານລ້ຽງ** ໝາຍເຖິງງານທີ່ຈັດຂຶ້ນ ເພື່ອເປັນການພົບປະສັງສັນ, ຮັບປະທານອາຫານ, ກິນດື່ມເພື່ອສ້າງຄວາມສາມັກຄີຮັກແພງກັນ ເນື່ອງໃນໂອກາດວັນສໍາຄັນຕ່າງໆ;
6. **ໝໍພອນ** ໝາຍເຖິງຜູ້ທີ່ມີຄວາມຮູ້ດ້ານພິທີການໃນການສູ່ຂວັນ, ມີຄວາມຊໍານານໃນການໃຫ້ພອນ ທີ່ເປັນສິລິມຸງຄຸນ ແກ່ເຈົ້າຂອງງານ;
7. **ການປະຢັດ** ໝາຍເຖິງການນໍາໃຊ້ແຫຼ່ງທຶນ, ຊັບພະຍາກອນ, ເວລາ ແລະ ບຸກຄະລາກອນຢ່າງຈໍາກັດ, ສົມເຫດສົມຜົນ ແຕ່ມີຜົນຕອບແທນສູງ;
8. **ການຟຸມເຟືອຍ** ໝາຍເຖິງການນໍາໃຊ້ແຫຼ່ງທຶນ, ຊັບພະຍາກອນ, ເວລາ ແລະ ບຸກຄະລາກອນເກີນຄວາມຈໍາເປັນ ຫຼື ເກີນຖານະທາງເສດຖະກິດການເງິນບໍ່ສົມເຫດສົມຜົນ.

**ມາດຕາ 4 ນະໂຍບາຍຂອງລັດ**

ລັດຊຸກຍູ້, ສົ່ງເສີມ ໃຫ້ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງຕ່າງໆ ແລະ ທຸກພາກສ່ວນໃນສັງຄົມເປັນເຈົ້າການໃນການຄຸ້ມຄອງການຈັດງານ ແລະ ບຸນປະເພນີ ໃຫ້ປະຕິບັດຖືກຕ້ອງຕາມລະບຽບກົດໝາຍ.

**ມາດຕາ 5 ຫຼັກການກ່ຽວກັບການຄຸ້ມຄອງການຈັດງານ ແລະ ບຸນປະເພນີ**

1. ສອດຄ່ອງກັບແນວທາງນະໂຍບາຍ, ກົດໝາຍ ແລະ ຮີດຄອງປະເພນີອັນດີງາມຂອງຊາດ, ຂອງທ້ອງຖິ່ນ ແລະ ບັນດາເຜົ່າ;
2. ມີຄວາມຄວາມໂປ່ງໃສ, ເປີດເຜີຍ, ມີການປະສານງານກັບບັນດາພາກສ່ວນກ່ຽວຂ້ອງ ແລະ ຕິດຕາມກວດກາໄດ້;
3. ມີຄວາມປອດໄພທາງດ້ານຊັບສິນ, ຊີວິດ, ສຸຂະພາບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ສິ່ງແວດລ້ອມ, ການປະຢັດມັດທະຍັດ, ຕ້ານການຟຸມເຟືອຍ;
4. ມີຄວາມສາມັກຄີ ເປັນເອກະພາບ ແລະ ສະເໝີພາບຂອງປະຊາຊົນບັນດາເຜົ່າພາຍໃນແຂວງຫຼວງນໍ້າທາ

**ມາດຕາ 6 ຂອບເຂດການນຳໃຊ້ຂໍ້ຕົກລົງ**

ຂໍ້ຕົກລົງສະບັບນີ້ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງຕ່າງໆ ແລະ ທຸກພາກສ່ວນໃນສັງຄົມ, ຄົນລາວ, ຄົນບໍ່ມີສັນຊາດ, ຄົນຕ່າງດ້າວ, ຄົນຕ່າງປະເທດທີ່ມີເປົ້າໝາຍຈັດງານ ແລະ ບຸນປະເພນີຢູ່ພາຍໃນແຂວງຫຼວງນໍ້າທາ.

## ພາກທີ II
## ປະເພດງານ ແລະ ບຸນປະເພນີ

**ມາດຕາ 7 ປະເພດງານ ແລະ ບຸນປະເພນີ ປະກອບມີ:**

1. ການຈັດງານດອງ
2. ການຈັດງານບາສີສູ່ຂວັນ
3. ການຈັດງານລ້ຽງ ຫຼື ງານພົບປະສັງສັນ
4. ການຈັດງານບຸນປະເພນີ
5. ການຈັດງານຊາປະນະກິດສົບ

### ໝວດທີ 1
### ການຈັດງານດອງ

**ມາດຕາ 8 ການຈັດງານແຕ່ງດອງ**

ການຈັດງານແຕ່ງດອງລະຫວ່າງຄົນລາວກັບຄົນລາວ ຫຼື ຄົນລາວກັບຄົນຕ່າງປະເທດ ຕ້ອງປະຕິບັດຕາມຮີດຄອງປະເພນີອັນດີງາມ, ລະບຽບການຂອງອົງການປົກຄອງບ້ານ, ກົດໝາຍວ່າດ້ວຍທະບຽນຄອບຄົວ ສະບັບເລກທີ 44/ສພຊ, ລົງວັນທີ 14 ມິຖຸນາ 2018 ແລະ ຄຳແນະນຳຂອງກະຊວງພາຍໃນ ສະບັບເລກທີ 02/ພນ, ລົງວັນທີ 28 ມັງກອນ 2019, ຄູ່ບ່າວສາວຈະມີຖານະເປັນຄູ່ຜົວເມຍກັນທີ່ຖືກຕ້ອງ ນັບແຕ່ວັນທີ່ໄດ້ຈົດທະບຽນແຕ່ງດອງເປັນຕົ້ນໄປ.

**ມາດຕາ 9 ຄ່າຮີດຄອງ, ຄ່າສິນສອດ**

1. ຄ່າຮີດຄອງ, ພາຂວັນ, ເງິນລຸງຕາ, ເງິນຄ່າຈົດທະບຽນບ້ານ ແມ່ນໃຫ້ປະຕິບັດ ຕາມຮີດຄອງປະເພນີອັນດີງາມຂອງແຕ່ລະເຜົ່າ ແລະ ລະບຽບການລວມຂອງອົງການປົກຄອງບ້ານ ໂດຍບໍ່ຂັດກັບກົດໝາຍ ແລະ ລະບຽບການ;
2. ຄ່າສິນສອດແມ່ນໃຫ້ທັງສອງຝ່າຍ ຕົກລົງເປັນເອກະພາບກັນ ແລະ ປະຕິບັດຕາມຮີດຄອງປະເພນີຂອງແຕ່ລະເຜົ່າຕາມຄວາມສາມາດຂອງທັງສອງຝ່າຍ ຄຳບໍ່ເກີນ 2 ບາດ ແລະ ເງິນບໍ່ເກີນ 20 ລ້ານກີບ.

**ມາດຕາ 10 ການພິມບັດເຊີນງານດອງ**

ການພິມບັດເຊີນງານດອງ ຕ້ອງເລືອກໃຊ້ຊອງບັດເຊີນທີ່ມີຂະໜາດພໍດີງາມ, ບໍ່ໃຫ້ໃຊ້ຊອງໃຫຍ່ຫຼືນ້ອຍເກີນໄປ ແລະ ຈຳນວນລາຍຊື່ເຈົ້າພາບງານດອງບໍ່ໃຫ້ໃສ່ເກີນ 09 ຄູ່ ຕ້ອງຄັດເລືອກເອົາຜູ້ທີ່ເປັນຕົວແທນຕົ້ນຕໍເທົ່ານັ້ນ.

**ມາດຕາ 11 ການແຫ່ເຂີຍ, ແຫ່ໃພ້**

ການແຫ່ເຂີຍ, ແຫ່ໃພ້ ໃຫ້ປະຕິບັດຕາມຮີດຄອງປະເພນີອັນດີງາມຂອງລາວ, ມ່ວນຊື່ນດ້ວຍການເສບດົນຕີພື້ນເມືອງ, ເປີດ ຫຼື ຮ້ອງເພງລາວ, ເປີດເຄື່ອງສຽງພໍເໝາະສົມບໍ່ສ້າງຄວາມເບື່ອງບັນໃຫ້ກັບສັງຄົມ, ຄວນຫຼີກລ່ຽງການນຳໃຊ້ພາຫະນະຫຼວງຫຼາຍ ເຊິ່ງຈະເປັນການກີດຂວາງ ຫຼື ສ້າງຄວາມຫຍຸ້ງຍາກໃຫ້ກັບການສັນຈອນຕາມທ້ອງຖະໜົນ.

**ມາດຕາ 12 ການສູ່ຂວັນຄູ່ສົມລົດໃໝ່**

ການສູ່ຂວັນຄູ່ສົມລົດໃໝ່ ໃຫ້ປະຕິບັດຕາມຮີດຄອງປະເພນີຂອງບັນດາເຜົ່າທີ່ເຄີຍສືບທອດກັນມາ, ເຊິ່ງຈະຈັດຢູ່ເຮືອນຝ່າຍຊາຍ, ຝ່າຍຍິງ ຫຼື ສະຖານທີ່ອື່ນກໍ່ໄດ້ຕາມຄວາມສະດວກຂອງສອງຝ່າຍ, ການຕົກແຕ່ງປະດັບປະດາເອ້ຍ້ອງດ້ວຍດອກໄມ້ ຫຼື ວັດຖຸອື່ນໆ ແມ່ນບໍ່ໃຫ້ເກີນຄວາມຈຳເປັນ ຫຼື ເຮັດຫຼູຫຼາຈົນເກີນຂອບເຂດ.

**ມາດຕາ 13 ສະຖານທີ່ ແລະ ພາເຂົ້າໃນງານແຕ່ງດອງ**

1. ສະຖານທີ່ຈັດງານແຕ່ງດອງ ອາດຈະຈັດຢູ່ເຮືອນເຈົ້າພາບຝ່າຍໃດຝ່າຍໜຶ່ງ ຫຼື ສະຖານທີ່ອື່ນກໍ່ໄດ້ຕາມຄວາມເໝາະສົມ, ໃຫ້ພຽງພໍກັບການເຊີນແຂກທີ່ມາຮ່ວມງານ, ໃຫ້ຮັກສາໄລຍະຫ່າງ, ບໍ່ກີດຂວາງການສັນຈອນ;
2. ພາເຂົ້າໃນງານແຕ່ງດອງ ຈະຈັດເປັນພາ ຫຼື ແບບບຸບເຟ ອາຫານຕາມຄວາມເໝາະສົມຫຼາຍສຸດບໍ່ໃຫ້ເກີນ 200 ພາ, ອາຫານໃຫ້ພຽງພໍ ແລະ ໃຫ້ຫຸ້ມຫໍ່ຖືກຫຼັກອະນາໄມ ປອດໄພຕໍ່ສຸຂະພາບ, ບັນຈຸດ້ວຍວັດຖຸທຳມະຊາດ ຫຼື ວັດຖຸອື່ນທີ່ບໍ່ສົ່ງຜົນກະທົບຕໍ່ສຸຂະພາບ ແລະ ສິ່ງແວດລ້ອມ.

**ມາດຕາ 14 ພິທີການຮັບແຂກ ແລະ ການມ່ວນຊື່ນໃນງານແຕ່ງດອງ**

ພິທີການຮັບແຂກໃນງານແຕ່ງດອງ ເຊິ່ງປະກອບດ້ວຍເຈົ້າພາບຝ່າຍຊາຍ ແລະ ຝ່າຍຍິງ, ການທັກທາຍ ແລະ ຕ້ອນຮັບແຂກດ້ວຍການຍໍມືນົບຕາມປະເພນີຂອງລາວ, ສະແດງຄວາມເຄົາລົບເຊິ່ງກັນ ແລະ ກັນ ໃຫ້ກຽດແກ່ແຂກຜູ້ທີ່ມາຮ່ວມງານ;

ການຕ້ອນຮັບແຂກເຂົ້າງານໃນຕອນທ່ຽງແຕ່ເວລາ 11 ໂມງ - 12 ໂມງ 30 ນາທີ, ຕາງໜ້າເຈົ້າພາບທັງສອງຝ່າຍຂຶ້ນສູ່ເວທີກ່າວຕ້ອນຮັບ, ເຊີນແຂກຮັບປະທານອາຫານ ແລະ ການມ່ວນຊື່ນບໍ່ໃຫ້ເກີນເວລາ 16 ໂມງ;

ການຕ້ອນຮັບແຂກໃນງານຕອນຄ່ຳ ເລີ່ມແຕ່ເວລາ 18 ໂມງ - 19 ໂມງ ຕາງໜ້າເຈົ້າພາບທັງສອງຝ່າຍຂຶ້ນສູ່ເວທີກ່າວຕ້ອນຮັບ, ເຊີນແຂກຮັບປະທານອາຫານ ແລະ ມ່ວນຊື່ນບໍ່ໃຫ້ເກີນເວລາ 22 ໂມງ;

ການກ່າວຕ້ອນຮັບແຂກ ໃຫ້ມີເນື້ອໃນສັ້ນ, ກະທັດຮັດ, ເປັນສິລິມຸງຄຸນແກ່ຄູ່ສ້າງຄອບຄົວໃໝ່ ແລະ ແຂກທີ່ມາຮ່ວມງານ.

**ມາດຕາ 15 ເຄື່ອງດື່ມໃນງານແຕ່ງດອງ**

ໃຫ້ນຳໃຊ້ຜະລິດຕະພັນພາຍໃນປະເທດ ຫຼື ຜະລິດຕະພັນຂອງທ້ອງຖິ່ນເປັນຕົ້ນຕໍ, ການດື່ມ ໃຫ້ດື່ມຕາມຄວາມສາມາດຂອງແຕ່ລະຄົນ.

**ມາດຕາ 16 ການແຕ່ງກາຍໃນງານແຕ່ງດອງ**

ເຈົ້າພາບ, ເຈົ້າບ່າວ, ເຈົ້າສາວ ແລະ ແຂກຖືກເຊີນທີ່ມາຮ່ວມໃນງານແຕ່ງດອງ ເພດຍິງໃຫ້ນຸ່ງສິ້ນ, ເສື້ອສຸພາບ, ເພດຊາຍ ໃຫ້ນຸ່ງໂສ້ງຂາຍາວ, ເສື້ອສຸພາບ, ຊຸດປະຈຳຊາດ ຫຼື ຈະນຸ່ງຊຸດຊົນເຜົ່າຕາມເອກະລັກວັດທະນະທຳຂອງເຜົ່າຍິ່ງເປັນການດີ.

## ໝວດທີ 2
## ການຈັດງານບາສີສູ່ຂ້ວນ

**ມາດຕາ 17 ການຈັດງານບາສີສູ່ຂວັນ**

ການຈັດງານບາສີສູ່ຂວັນ ໃຫ້ປະຕິບັດຕາມຮີດຄອງປະເພນີອັນດີງາມຂອງແຕ່ລະເຜົ່າ, ບົນພື້ນຖານການປະຢັດຄ່າໃຊ້ຈ່າຍ ແລະ ເໝາະສົມກັບງານ

**ມາດຕາ 18 ໜໍພອນ**

ໜໍພອນຕ້ອງແຕ່ງກາຍສຸພາບຮຽບຮ້ອຍເໝາະສົມກັບງານ, ການໃຫ້ພອນຕ້ອງຖືກຕາມເນື້ອໃນຈິດໃຈ ຈຸດປະສົງຂອງງານທີ່ເຈົ້າພາບຈັດຂຶ້ນ, ການສູດ ຫຼື ຄໍາໃຫ້ພອນຕ້ອງເໝາະສົມບໍ່ສັ້ນ ຫຼື ບໍ່ຍາວເກີນໄປ.

**ມາດຕາ 19 ສະຖານທີ່ ແລະ ພາເຂົ້າໃນງານບາສີສູ່ຂວັນ**

ສະຖານທີ່ ແລະ ພາເຂົ້າໃນງານບາສີສູ່ຂວັນ ໃຫ້ປະຕິບັດຄືກັບມາດຕາ 13 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 20 ການມ່ວນຊື່ນໃນງານບາສີສູ່ຂວັນ**

ການມ່ວນຊື່ນໃນງານບາສີສູ່ຂວັນໃຫ້ປະຕິບັດຕາມຮີດຄອງວັດທະນະທໍາຂອງລາວ ຫຼື ປະຕິບັດຄືກັນກັບມາດຕາ 14 ຂອງຂໍ້ຕົກລົງສະບັບນີ້.

## ໝວດທີ 3
## ການຈັດງານລ້ຽງ ຫຼື ງານພົບປະສັງສັນ

**ມາດຕາ 21 ສະຖານທີ່ ແລະ ພາເຂົ້າໃນງານ**

ສະຖານທີ່ຈັດງານລ້ຽງຈະຈັດຢູ່ເຮືອນບຸກຄົນ, ສໍານັກງານອົງການ, ຮ້ານອາຫານ, ພັດຕະຄານ ຫຼື ສະຖານທີ່ຕ່າງໆ ຕາມຄວາມສາມາດຂອງເຈົ້າພາບຈັດງານ, ສະຖານທີ່ຕ້ອງມີຄວາມສະດວກ, ບໍ່ແອອັດ, ຫຼີກລ່ຽງການຈັດງານທີ່ສ້າງຄວາມຫຍຸ້ງຍາກໃຫ້ກັບການສັນຈອນ ແລະ ສ່ຽງຕໍ່ການເກີດອຸປະຕິເຫດ;

ການປະດັບປະດາຕົບແຕ່ງງານລ້ຽງ ຫຼື ງານພົບປະສັງສັນ ໃຫ້ເຮັດແບບລຽບງ່າຍ, ຖືກຕາມຈຸດປະສົງຂອງງານ, ການຈັດງານຕ້ອງໃຫ້ປະຢັດ, ບໍ່ຄວນຈັດງານແບບໃຫຍ່ໂຕ;

ອາຫານໃນງານລ້ຽງຕ້ອງຮັບປະກັນຫຼັກອະນາໄມ, ປອດໄພຕໍ່ສຸຂະພາບ, ຕ້ອງບັນຈຸດ້ວຍວັດຖຸທໍາມະຊາດ ຫຼື ວັດຖຸອື່ນ ທີ່ບໍ່ສົ່ງຜົນກະທົບຕໍ່ສຸຂະພາບ.

**ມາດຕາ 22 ເຄື່ອງດື່ມໃນງານລ້ຽງ**

ເຄື່ອງດື່ມໃນງານລ້ຽງໃຫ້ນໍາໃຊ້ຜະລິດຕະພັນພາຍໃນປະເທດ ຫຼື ຜະລິດຕະພັນຂອງທ້ອງຖິ່ນຂອງຕົນເປັນຕົ້ນຕໍ ຫຼື ປະຕິບັດຄືກັນກັບມາດຕາ 15 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 23 ການແຕ່ງກາຍໃນງານລ້ຽງ**

ເຈົ້າພາບ, ແຂກຖືກເຊີນ ທີ່ມາຮ່ວມງານລ້ຽງ ຕ້ອງແຕ່ງກາຍໃຫ້ສຸພາບຮຽບຮ້ອຍຕາມວັດທະນະທໍາການນຸ່ງຖືຂອງລາວ ຫຼື ອາດຈະນຸ່ງຕາມເອກະລັກວັດທະນະທໍາຂອງເຜົ່າກໍ່ໄດ້;

ຖ້າເປັນງານລ້ຽງທາງລັດຖະການ ຕ້ອງໃສ່ຊຸດສຸພາບ, ຊຸດປະຈໍາຊາດ, ຊຸດສາກົນ ຫຼື ຊຸດທີ່ໄດ້ກໍານົດໃຫ້ສະເພາະງານ.

## ໝວດທີ 4
## ການຈັດງານບຸນປະເພນີ

**ມາດຕາ 24 ການກະກຽມ ແລະ ສະຖານທີ່ຈັດງານບຸນປະເພນີ**

ການກະກຽມບຸນປະເພນີຕ່າງໆ ອົງການປົກຄອງແຕ່ລະຂັ້ນ, ປະຊາຊົນບັນດາເຜົ່າພາຍໃນແຂວງ, ເມືອງ, ບ້ານຕ້ອງມີຄວາມເປັນເອກະພາບກັນ ແລະ ໃຫ້ມີການແຕ່ງຕັ້ງຄະນະຮັບຜິດຊອບ, ປະສານສົມທົບຢ່າງກົມກຽວກັບບັນດາອົງການກ່ຽວຂ້ອງ ໂດຍແມ່ນອົງການປົກຄອງບ້ານ, ເຖົ້າແກ່ແນວໂຮມຜູ້ຊົງຄຸນວຸດທິເປັນເຈົ້າການ ເພື່ອໃຫ້ງານດໍາເນີນໄປສະດວກ ແລະ ຄ່ອງຕົວ;

ຄະນະຮັບຜິດຊອບ ຕ້ອງສ້າງແຜນສະເໜີກິດຈະກໍາທີ່ຈະດໍາເນີນ ສະເໜີຕໍ່ອົງການປົກຄອງ ຫຼື ຂະແໜງການກ່ຽວຂ້ອງ;

ໃນກໍລະນີເປັນການຈັດງານບຸນປະເພນີຂອງບຸກຄົນ, ຄອບຄົວຜູ້ຈັດງານບຸນປະເພນີນັ້ນຕ້ອງໄດ້ກະກຽມຄວາມພ້ອມໃນດ້ານຕ່າງໆໃຫ້ຄົບຖ້ວນ, ຖືກຕ້ອງຕາມປະເພນີ ແລະ ຕ້ອງແຈ້ງໃຫ້ອົງການປົກຄອງບ້ານ ຫຼື ພາກສ່ວນກ່ຽວຂ້ອງຮັບຮູ້;

ສະຖານທີ່ຈັດງານບຸນປະເພນີຕ່າງໆ ອາດຈະຈັດຢູ່ສະຖານທີ່ເຮືອນ, ວັດ, ສະໂມສອນ, ສຳນັກງານອົງການ ແລະ ສະຖານທີ່ອື່ນໆ ຕາມສະດວກຂອງຜູ້ຈັດງານ, ແຕ່ຕ້ອງເໝາະສົມບໍ່ແອອັດ ແລະ ຮັບປະກັນຄວາມສະຫງົບປອດໄພ.

**ມາດຕາ 25 ອາຫານໃນງານບຸນປະເພນີ**

ອາຫານໃນງານບຸນປະເພນີຕ່າງໆ ສາມາດປຸງແຕ່ງໄດ້ຫຼາຍປະເພດ, ຕາມຮີດຄອງ ແລະ ຕາມຈຸດປະສົງຂອງຜູ້ຈັດງານ ແຕ່ຕ້ອງຖືກຫຼັກອະນາໄມ, ຫຸ້ມຫໍ່ ຫຼື ບັນຈຸດ້ວຍວັດຖຸອື່ນທີ່ບໍ່ສົ່ງຜົນກະທົບຕໍ່ຊີວິດ, ສຸຂະພາບ;

ການຈັດພາເຂົ້າໃນງານບຸນປະເພນີຕ່າງໆ ສາມາດຈັດເປັນພາເຂົ້າ ຫຼື ເປັນໂຕະອາຫານຕາມຄວາມເໝາະສົມຂອງງານບຸນດັ່ງກ່າວ.

**ມາດຕາ 26 ເຄື່ອງດື່ມໃນງານບຸນປະເພນີ**

ເຄື່ອງດື່ມໃນງານບຸນປະເພນີໃຫ້ນຳໃຊ້ຜະລິດຕະພັນພາຍໃນປະເທດ ຫຼື ຜະລິດຕະພັນຂອງທ້ອງຖິ່ນເປັນຕົ້ນຕໍ ຫຼື ປະຕິບັດຄືກັນກັບມາດຕາ 15 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 27 ການແຕ່ງກາຍໃນງານບຸນປະເພນີ**

ເຈົ້າພາບ, ແຂກຖືກເຊີນ ມາຮ່ວມໃນງານບຸນປະເພນີຕ່າງໆ ຕ້ອງແຕ່ງກາຍໃຫ້ສຸພາບຮຽບຮ້ອຍຕາມວັດທະນະທຳການນຸ່ງຖືຂອງລາວ ເຊັ່ນ: ເພດຍິງນຸ່ງສິ້ນ, ເສື້ອແພໄໝ ຫຼື ເສື້ອສຸພາບ ແລະ ເພດຊາຍນຸ່ງໂສ້ງຂາຍາວ, ເສື້ອແພໄໝ, ເສື້ອສຸພາບ ຫຼື ອາດຈະນຸ່ງຕາມເອກະລັກວັດທະນະທຳຂອງເຜົ່າ.

**ມາດຕາ 28 ການມ່ວນຊື່ນໃນງານບຸນປະເພນີ**

ການມ່ວນຊື່ນໃນງານບຸນປະເພນີ, ບຸນກິນທານ, ລາຍການສະແດງ, ບົດເພງ ແລະ ຂັບລຳທ້ອງຖິ່ນ, ດົນຕີພື້ນເມືອງ ຕ້ອງແທດເໝາະກັບຈຸດປະສົງຂອງງານ, ໃນນັ້ນຕ້ອງຖືເອົາການສົ່ງເສີມລາຍການຂອງບັນດາເຜົ່າ, ຂອງທ້ອງຖິ່ນເປັນສຳຄັນ ແລະ ການມ່ວນຊື່ນໃຫ້ຮັກສາໄດ້ຮີດຄອງວັດທະນະທຳອັນດີງາມ, ບໍ່ໃຊ້ສຽງເນືອງນັນລົບກວນສັງຄົມ, ໃນງານບຸນກິນທານ ແມ່ນບໍ່ໃຫ້ແກ່ຍາວເກີນເວລາ 3 ວັນ.

## ໝວດທີ 5
## ການຈັດງານຊາປະນະກິດສົບ

**ມາດຕາ 29 ການແຈ້ງເສຍຊີວິດ**

ເມື່ອມີຜູ້ເສຍຊີວິດຢູ່ໃນຄອບຄົວໃດໜຶ່ງ ຫຼື ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງບ້ານໃດໜຶ່ງຕ້ອງແຈ້ງໃຫ້ອົງການປົກຄອງບ້ານ ແລະ ການຈັດຕັ້ງທີ່ກ່ຽວຂ້ອງຮັບຮູ້ ເພື່ອຈັດງານຊາປະນາກິດສົບຕາມຄວາມເໝາະສົມ ແລະ ແຈ້ງເສຍຊີວິດ.

**ມາດຕາ 30 ການຈັດງານຊາປານະກິດສົບ**

1. ຄອບຄົວຂອງຜູ້ເສຍຊີວິດສາມາດຈັດງານຊາປານະກິດສົບຢູ່ເຮືອນ, ວັດ ຫຼື ສະຖານທີ່ອົງການປົກຄອງ ແລະ ການຈັດຕັ້ງທີ່ກ່ຽວຂ້ອງອະນຸຍາດ;
2. ຄະນະຮັບຜິດຊອບຈັດງານຊາປານະກິດສົບ, ມີໜ້າທີ່ປຶກສາຫາລືກັບຄອບຄົວຂອງຜູ້ເສຍຊີວິດ, ອົງການປົກຄອງບ້ານ ແລະ ພາກສ່ວນກ່ຽວຂ້ອງ ເພື່ອສົ່ງສະການຕາມຄວາມເໝາະສົມ;

3. ກໍລະນີຜູ້ເສຍຊີວິດຫາກບໍ່ມີຍາດຕິພີ່ນ້ອງ ແມ່ນໃຫ້ອົງການປົກຄອງບ້ານ ປະສານສົມທົບກັບເຈົ້າໜ້າທີ່ຕໍາຫຼວດເມືອງ, ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ, ຂະແໜງການກ່ຽວຂ້ອງເປັນເຈົ້າການໃນການນໍາເອົາສົບໄປສົ່ງສະການຕາມຄວາມເໝາະສົມ;
4. ໃຫ້ປະຕິບັດຕາມຮີດຄອງປະເພນີຂອງແຕ່ລະເຜົ່າ, ຫຼີກເວັ້ນກິດຈະກໍາທີ່ສິ້ນເປືອງ, ຟູມເຟືອຍ, ແກ່ຍາວເວລາ ແລະ ພິທີທີ່ງົມງວາຍຫຼ້າຫຼັງ.

**ມາດຕາ 31 ການເຄື່ອນຍ້າຍສົບ**

ກໍລະນີມີຜູ້ເສຍຊີວິດຢູ່ນອກບ້ານຜູ້ກ່ຽວອາໄສ ຍາດພີ່ນ້ອງສາມາດນໍາເອົາສົບເຂົ້າບ້ານໄດ້ ແລະ ບໍາເພັນກຸສົນຢູ່ເຮືອນ ແລະ ບ້ານຂອງຜູ້ເສຍຊີວິດຕາມຮີດຄອງປະເພນີ;

ໃນກໍລະນີມີຜູ້ເສຍຊີວິດຫຼາຍຄົນໃນວັນດຽວກັນ, ອົງການປົກຄອງຂັ້ນບ້ານ ມີໜ້າທີ່ພິຈາລະນາວັນເວລາສົ່ງສະການຕາມຮີດຄອງປະເພນີບັນດາເຜົ່າ ບໍ່ໃຫ້ເກີນ **ສາມ** ວັນ.

## ພາກທີ III
## ວົງດົນຕີ

**ມາດຕາ 32 ໂຄສົກ, ນັກຮ້ອງ, ນັກດົນຕີ**

ພິທີກອນ ຫຼື ໂຄສົກ ໃຫ້ວາງຕົວໃຫ້ເໝາະສົມກັບງານ, ຕ້ອງມີທ່າທາງສະຫງ່າຜ່າເຜີຍ, ມີທັດສະນະສ້າງສັນ, ຮູ້ໝູນໃຊ້ເວລາ ເພື່ອໂຄສະນາປຸກລະດົມຂະບວນການສ້າງສາພັດທະນາ, ສົ່ງເສີມສິລະປະວັດທະນະທໍາອັນດີງາມ, ຄວາມສາມັກຄີ, ເປັນເຈົ້າການໃນການຈັດລາຍການມ່ວນຊື່ນໃຫ້ມີບັນຍາກາດດີ, ການເວົ້າຈາໃຫ້ໃຊ້ສັບພາສາທີ່ຊັດເຈນ, ເໝາະສົມກັບປະເພດຂອງງານ, ຫຼີກລ່ຽງການໃຊ້ສັບຄໍາເວົ້າທີ່ບໍ່ສຸພາບ, ຫຍາບຄາຍ, ສຽດສີ ຫຼື ໝິ່ນປະໝາດຜູ້ອື່ນ;

ນັກຮ້ອງ ການຮ້ອງເພງໃນງານຕ່າງໆໃຫ້ຮ້ອງເພງລາວກວມເອົາ 70% ຂຶ້ນໄປ, ໃຫ້ຮ້ອງເພງທີ່ມີເນື້ອຫາສຸພາບ, ສ້າງສັນຕໍ່ເຈົ້າພາບ ແລະ ແຂກທີ່ມາຮ່ວມງານ, ຫຼີກລ່ຽງການຮ້ອງເພງທີ່ເປັນການເຍາະເຍີ້ຍສຽດສີ ຫຼື ບໍ່ຖືກຕ້ອງຕາມຮີດຄອງປະເພນີອັນດີງາມ;

ນັກດົນຕີ ຕ້ອງໄປເຖິງສະຖານທີ່ຈັດງານ ແລະ ກຽມຄວາມພ້ອມລ່ວງໜ້າກ່ອນເວລາເຊີນແຂກເຂົ້າງານ, ກະກຽມລະບົບອຸປະກອນເຕັກນິກ ແລະ ສິ່ງເອື້ອອໍານວຍເຄື່ອງສຽງໃຫ້ແກ່ງານ.

**ມາດຕາ 33 ການແຕ່ງກາຍຂອງໂຄສົກ, ນັກຮ້ອງ, ນັກດົນຕີ**

ການແຕ່ງກາຍຂອງໂຄສົກ, ນັກຮ້ອງ, ນັກດົນຕີ ໃນເວລາປະຕິບັດໜ້າທີ່ໃນງານ ໃຫ້ເໝາະສົມກັບງານ, ເປັນລະບຽບສຸພາບຮຽບຮ້ອຍ.

## ພາກທີ IV
## ຂໍ້ຫ້າມ

**ມາດຕາ 34 ຂໍ້ຫ້າມທົ່ວໄປ**

1. ຈັດງານແຕ່ງດອງ, ງານບາສີສູ່ຂວັນ, ງານລ້ຽງ ແລະ ງານບຸນປະເພນີຕ່າງໆຂອງບຸກຄົນທີ່ໃຫຍ່ໂຕເກີນໄປ, ແກ່ຍາວເວລາເກີນ 03 ວັນ, ມີຈຸດປະສົງເປັນການຫາລາຍໄດ້, ອວດອ້າງຖານະຕໍາແໜ່ງ ແລະ ອິດທິພົນທາງສັງຄົມ;
2. ຈັດງານ ເພື່ອສວຍໂອກາດເຄື່ອນໄຫວກິດຈະກໍາ ທີ່ຂັດກັບກົດໝາຍ, ລະບຽບການ, ສ້າງຄວາມເສື່ອມເສຍ ໃຫ້ແກ່ວັດທະນະທໍາ, ຮີດຄອງປະເພນີອັນດີງາມຂອງຊາດ, ຂອງທ້ອງຖິ່ນ ແລະ ບັນດາເຜົ່າ;
3. ນໍາໃຊ້ຖະໜົນຫົນທາງ ເປັນສະຖານທີ່ຈັດງານ ເພື່ອຄວາມປອດໄພໃນການຈະລາຈອນ (ຖ້າມີຄວາມຈໍາເປັນຕ້ອງໄດ້ຮັບອະນຸຍາດຈາກພາກສ່ວນກ່ຽວຂ້ອງ);

4. ການໃຫ້ພອນບໍ່ເປັນມຸງຄຸນ, ຮຽກຮ້ອງເອົາຄ່າຂັນຕັ້ງເກີນຄວາມສາມາດເຈົ້າພາບ, ເຈົ້າສັດທາ;
5. ນໍາໃຊ້ວັດຖຸມາປຸ່ງແຕ່ງອາຫານ ແລະ ບັນຈຸຫຸ້ມຫໍ່ອາຫານທີ່ສົ່ງຜົນກະທົບຕໍ່ຊີວິດ, ສຸຂະພາບ;
6. ຮັບປະທານອາຫານກ່ອນເຈົ້າພາບກ່າວເປີດງານ, ການຕັກອາຫານແບບບຸບເຟຫຼາຍເກີນຄວາມສາມາດຮັບປະທານອາຫານຂອງຕົນ;
7. ນໍາໃຊ້ຈອກເຫຼົ້າ, ເບຍ, ບ່ວງ, ໄມ້ຖູ່ ຮ່ວມກັນຢູ່ໃນງານຕ່າງໆ ທີ່ຈະພາໃຫ້ເກີດພະຍາດຕິດແປດຕ່າງໆ;
8. ຂັບ, ລໍາ, ຮ້ອງເພງ, ເປີດເພງທີ່ມີເນື້ອຫາບໍ່ສຸພາບ, ເຍາະເຍີ້ຍສຽດສີ ແລະ ໂຄສະນາບິດເບືອນ, ບໍ່ສອດຄ່ອງກັບແນວທາງຂອງພັກ, ກົດໝາຍ ແລະ ລະບຽບການ, ເປີດເຄື່ອງສຽງດັງເກີນຂອບເຂດ;
9. ສວຍໃຊ້ການຈັດງານໂຄສະນາທັບຖົມຈິນຕີ ສ້າງຄວາມເສື່ອມເສຍຕໍ່ການຈັດຕັ້ງ, ບຸກຄົນ, ນິຕິບຸກຄົນ;
10. ຖືອາວຸດ, ວັດຖຸມີຄົມ, ສິ່ງເສບຕິດ, ສານເຄມີ, ກໍ່ກວນອາລະວາດຕີກັນ, ປະພຶດສິ່ງລາມົກອານາຈານ ແລະ ສ້າງຄວາມບໍ່ສະຫງົບຮູບແບບຕ່າງໆ;
11. ຈູດໝາກກະໂພກ, ວັດຖຸມີສຽງແຕກ (ໂດຍບໍ່ໄດ້ຮັບອະນຸຍາດຈາກພາກສ່ວນກ່ຽວຂ້ອງ) ທຸກປະເພດໃນງານຕ່າງໆ ທີ່ເປັນການສ້າງຄວາມບໍ່ສະຫງົບໃນສັງຄົມ;
12. ເດັກທີ່ມີອາຍຸຕໍ່າກວ່າ 18 ປີ, ດື່ມສິ່ງມຶນເມົາ, ໃນງານແຕ່ງດອງ, ງານລ້ຽງ ແລະ ງານສັງສັນອື່ນໆ;
13. ນຸ່ງຖືບໍ່ສຸພາບ, ບໍ່ເໝາະສົມ, ບໍ່ຖືກຕາມວັດທະນະທໍາຮີດຄອງປະເພນີອັນດີງາມຂອງຊາດ, ຂອງເຜົ່າ;
14. ບໍ່ໃຫ້ລາກ, ດຶງ, ໂຍນ, ຫາມ, ເຈົ້າບ່າວ, ເຈົ້າສາວ ແລະ ສົດເຄື່ອງດື່ມຢູ່ໃນງານ.

**ມາດຕາ 35 ຂໍ້ຫ້າມສໍາລັບງານຊາປະນະກິດສົບ**

1. ຖືເອົາການຄົບງັນງານສົບ ເປັນບ່ອນມົ້ວສຸມສິ່ງເສບຕິດ, ຫຼິ້ນການພະນັນ ທີ່ເປັນການກໍ່ກວນຄວາມບໍ່ສະຫງົບໃນງານ;
2. ຈູດ ຫຼື ຝັງສົບຊະຊາຍ ບໍ່ໄດ້ຮັບອະນຸຍາດຈາກບ້ານ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງກໍານົດ;
3. ຄົບງັນງານສົບເປັນເວລາຫຼາຍວັນ, ສົບຜູ້ທີ່ເປັນພະຍາດຕິດແປດ ບໍ່ໃຫ້ເກີນ **ສາມ** ວັນ;
4. ບັງຄັບຄອບຄົວ, ຍາດພີ່ນ້ອງຂອງຜູ້ເສຍຊີວິດ ເຮັດຮີດຄອງງານສົບເກີນຄວາມສາມາດຂອງຖານະ.

## ພາກທີ V
## ອົງການຄຸ້ມຄອງ

**ມາດຕາ 36 ອົງການຄຸ້ມຄອງ**

ອົງການປົກຄອງແຂວງມອບໃຫ້ພະແນກຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວແຂວງ, ຫ້ອງການຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວເມືອງ ເປັນຜູ້ຄຸ້ມຄອງການຈັດງານ ແລະ ບຸນປະເພນີຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວແຂວງ ພ້ອມທັງເປັນຜູ້ຮັບຜິດຊອບໂດຍກົງທັງເປັນເຈົ້າການປະສານສົມທົບຂະແໜງການກ່ຽວຂ້ອງ ແລະ ສົມທົບກັບອົງການປົກຄອງເມືອງ, ອົງການປົກຄອງບ້ານຄຸ້ມຄອງການຈັດງານ ແລະ ບຸນປະເພນີ.

ອົງການຄຸ້ມຄອງປະກອບມີ:

1. ພະແນກຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວແຂວງ;
2. ຫ້ອງການຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວເມືອງ;
3. ອົງການລັດທີ່ກ່ຽວຂ້ອງຂັ້ນແຂວງ;
4. ອົງການລັດທີ່ກ່ຽວຂ້ອງຂັ້ນເມືອງ;
5. ອົງການປົກຄອງບ້ານ

**ມາດຕາ 37 ສິດ ແລະ ໜ້າທີ່ຂອງພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ**

1. ເປັນເຈົ້າການໂຄສະນາ, ເຜີຍແຜ່ຂໍ້ຕົກລົງສະບັບນີ້ໃຫ້ປະຊາຊົນບັນດາເຜົ່າ, ການຈັດຕັ້ງທຸກພາກສ່ວນພາຍໃນແຂວງຮັບຮູ້ຢ່າງທົ່ວເຖິງ;
2. ຊຸກຍູ້, ຕິດຕາມ, ກວດກາການເຄື່ອນໄຫວຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທຸກພາກສ່ວນພາຍໃນແຂວງທີ່ຈັດງານແຕ່ງດອງ, ງານບາສີສູ່ຂວັນ, ງານລ້ຽງ ແລະ ງານບຸນປະເພນີຕ່າງໆ, ງານຊາປານະກິດສົບ;
3. ກວດກາເນື້ອໃນງານບຸນ, ບັນດາກິດຈະກຳທີ່ສະເໜີຈັດງານບຸນປະເພນີຕ່າງໆ ຂອງອົງການຈັດຕັ້ງລັດ, ອົງການຈັດຕັ້ງສັງຄົມຂັ້ນແຂວງ, ຂັ້ນເມືອງ;
4. ສຶກສາອົບຮົມ ແລະ ກ່າວເຕືອນບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທຸກພາກສ່ວນທີ່ມີການລະເມີດ ຫຼື ຝ່າຝືນ ບໍ່ປະຕິບັດຕາມຂໍ້ຕົກລົງສະບັບນີ້;
5. ສົມທົບກັບຜູ້ຈັດງານປະເພດຕ່າງໆ, ອົງການກວດກາພາຍໃນ, ພາຍນອກ ແກ້ໄຂໃນກໍລະນີມີບັນຫາໃດໜຶ່ງເກີດຂຶ້ນໃຫ້ທັນເວລາ;
6. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 38 ສິດ ແລະ ໜ້າທີ່ຂອງຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງ**

1. ເປັນເຈົ້າການໂຄສະນາ, ເຜີຍແຜ່ຂໍ້ຕົກລົງສະບັບນີ້ໃຫ້ປະຊາຊົນບັນດາເຜົ່າ, ການຈັດຕັ້ງທຸກພາກສ່ວນພາຍໃນເມືອງ ຮັບຮູ້ຢ່າງທົ່ວເຖິງ;
2. ຊຸກຍູ້, ຕິດຕາມ ກວດກາການເຄື່ອນໄຫວບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທຸກພາກສ່ວນ ພາຍໃນເມືອງຂອງຕົນ ທີ່ຈັດງານແຕ່ງດອງ, ງານບາສີສູ່ຂວັນ, ງານລ້ຽງ ແລະ ງານບຸນປະເພນີຕ່າງໆ, ງານຊາປານະກິດສົບ;
3. ກວດກາເນື້ອໃນງານບຸນ, ບັນດາກິດຈະກຳທີ່ສະເໜີຈັດງານບຸນປະເພນີຕ່າງໆ ຂອງອົງການຈັດຕັ້ງລັດ, ອົງການຈັດຕັ້ງສັງຄົມ, ບ້ານ, ກຸ່ມບ້ານ ພາຍໃນເມືອງຂອງຕົນຮັບຜິດຊອບ;
4. ສຶກສາອົບຮົມ ແລະ ກ່າວເຕືອນບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີການລະເມີດ ຫຼື ຝ່າຝືນ ຕໍ່ຂໍ້ຕົກລົງສະບັບນີ້;
5. ສົມທົບກັບຜູ້ຈັດງານປະເພດຕ່າງໆ, ອົງການກວດກາພາຍໃນ, ພາຍນອກ ແກ້ໄຂໃນກໍລະນີມີບັນຫາໃດໜຶ່ງເກີດຂຶ້ນ ໃຫ້ທັນເວລາ;
6. ປະຕິບັດສິດ ແລະ ໜ້າທີ່ອື່ນໆຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 39 ສິດ ແລະ ໜ້າທີ່ຂອງອົງການລັດທີ່ກ່ຽວຂ້ອງຂັ້ນແຂວງ ແລະ ຂັ້ນເມືອງ**

ສິດ ແລະ ໜ້າທີ່ອົງການລັດທີ່ກ່ຽວຂ້ອງຂັ້ນແຂວງ, ຂັ້ນເມືອງ ໃຫ້ປະຕິບັດຕາມສິດ ແລະ ໜ້າທີ່ຂອງຂະແໜງການຂອງຕົນທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 40 ສິດ ແລະ ໜ້າທີ່ຂອງອົງການປົກຄອງບ້ານ**

ສິດ ແລະ ໜ້າທີ່ຂອງອົງການປົກຄອງບ້ານມີດັ່ງນີ້:

1. ໂຄສະນາ, ເຜີຍແຜ່ຂໍ້ຕົກລົງສະບັບນີ້ໃຫ້ປະຊາຊົນບັນດາເຜົ່າພາຍໃນບ້ານໃຫ້ຮັບຮູ້ຢ່າງທົ່ວເຖິງ; ຊຸກຍູ້ ຕິດຕາມ, ກວດກາການເຄື່ອນໄຫວຂອງບັນດາຄອບຄົວພາຍໃນບ້ານຂອງຕົນທີ່ຈັດງານ ແລະ ບຸນປະເພນີຕ່າງໆພາຍໃນບ້ານຂອງຕົນ;
2. ຊຸກຍູ້ປະຊາຊົນບັນດາເຜົ່າພາຍໃນບ້ານຂອງຕົນ ເອົາໃຈໃສ່ໃນການຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ;
3. ສຶກສາອົບຮົມ ແລະ ກ່າວເຕືອນບຸກຄົນ, ນິຕິບຸກຄົນທີ່ລະເມີດບໍ່ປະຕິບັດຕາມຂໍ້ຕົກລົງສະບັບນີ້;

4. ສົມທົບ, ປະສານງານກັບຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງ ແລະ ພາກສ່ວນກ່ຽວຂ້ອງແກ້ໄຂບັນຫາໃນກໍລະນີເກີດບັນຫາຂຶ້ນ;
5. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ.

## ພາກທີ VI
## ອົງການກວດກາ

**ມາດຕາ 41 ອົງການກວດກາພາຍໃນ**

ອົງການກວດກາພາຍໃນ ແມ່ນອົງການດຽວກັນກັບອົງການຄຸ້ມຄອງການຈັດງານ ແລະ ບຸນປະເພນີຕ່າງໆພາຍໃນແຂວງຫຼວງນ້ຳທາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 36 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 42 ອົງການກວດກາພາຍນອກ**

ອົງການກວດກາພາຍນອກປະກອບມີ: ສະພາປະຊາຊົນແຂວງ, ອົງການກວດກາລັດແຂວງ, ອົງການແນວລາວສ້າງຊາດແຂວງ, ສະພາປະຊົນປະຈຳເຂດເລືອກຕັ້ງ, ບັນດາເມືອງ, ອົງການກວດກາເມືອງ, ອົງການແນວລາວສ້າງຊາດເມືອງ, ອົງການຈັດຕັ້ງມະຫາຊົນ, ປະຊາຊົນ ແລະ ສື່ມວນຊົນ;

ອົງການກວດກາພາຍນອກມີສິດ ແລະ ໜ້າທີ່ກວດກາຕາມພາລະບົດບາດຂອງຕົນທີ່ກົດໝາຍກ່ຽວຂ້ອງໄດ້ກຳນົດໄວ້.

**ມາດຕາ 43 ເນື້ອໃນ ແລະ ຮູບການກວດກາ**

**ເນື້ອໃນກວດກາການຈັດງານ ແລະ ບຸນປະເພນີປະກອບມີ:**

1. ກວດກາການປະຕິບັດນະໂຍບາຍ, ກົດໝາຍ, ລະບຽບການ, ທີ່ກ່ຽວຂ້ອງກັບວຽກງານການຄຸ້ມຄອງການຈັດງານ ແລະ ບຸນປະເພນີ;
2. ກວດກາການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງການຈັດງານ ແລະ ບຸນປະເພນີ;
3. ກວດກາຄວາມຮັບຜິດຊອບ, ການປະພຶດ ແລະ ແບບແຜນວິທີເຮັດວຽກ ຂອງພະນັກງານກ່ຽວກັບວຽກງານການຄຸ້ມຄອງການຈັດງານ ແລະ ບຸນປະເພນີ.

**ມາດຕາ 44 ຮູບການກວດກາ**

1. ກວດກາຕາມປົກກະຕິ: ແມ່ນການກວດກາທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ ໂດຍແຈ້ງໃຫ້ຜູ້ຖືກກວດກາຮັບຮູ້ລ່ວງໜ້າ;
2. ກວດການອກແຜນການ: ເມື່ອເຫັນວ່າມີຄວາມຈຳເປັນ ຫຼື ໂດຍມີຂໍ້ມູນວ່າມີເຫດການທີ່ຜິດປົກກະຕິເກີດຂຶ້ນຊຶ່ງແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ;
3. ກວດກາແບບກະທັນຫັນ: ແມ່ນການກວດກາໂດຍຮີບດ່ວນ ໂດຍບໍ່ແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າໃນການດຳເນີນການກວດກາເຈົ້າໜ້າທີ່ກວດກາຕ້ອງປະຕິບັດໜ້າທີ່ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ.

## ພາກທີ VII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 45 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງລັດ, ອົງການຈັດຕັ້ງສັງຄົມ ທີ່ມີຜົນງານດີເດັ່ນ ໃນການເຄື່ອນໄຫວຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ, ສັນລະເສີນຕາມຄວາມເໝາະສົມ

**ມາດຕາ 46 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງລັດ, ອົງການຈັດຕັ້ງສັງຄົມ ຫາກລະເມີດຂໍ້ຕົກລົງສະບັບນີ້ຈະຖືກສຶກສາອົບຮົມ, ກ່າວເຕືອນ, ປັບໃໝ ແລະ ຮ້າຍແຮງຈະຖືກດຳເນີນຄະດີຕາມກົດໝາຍ.

## ພາກທີ VIII
## ບົດບັນຍັດສຸດທ້າຍ

**ມາດຕາ 47 ການຈັດຕັ້ງປະຕິບັດ**

ມອບໃຫ້ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ, ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງ, ອົງການປົກຄອງເມືອງ ແລະ ອົງການປົກຄອງບ້ານ, ການຈັດຕັ້ງທຸກພາກສ່ວນທີ່ກ່ຽວຂ້ອງ ເປັນເຈົ້າການເຜີຍແຜ່ຂໍ້ຕົກລົງສະບັບນີ້ຢູ່ພາຍໃນຂອບເຂດຄວາມຮັບຜິດຊອບຂອງຕົນຢ່າງທົ່ວເຖິງ, ພ້ອມທັງຕິດຕາມ, ກວດກາ, ປະເມີນຜົນ, ຖອດຖອນບົດຮຽນ ການຈັດຕັ້ງປະຕິບັດໃຫ້ມີປະສິດທິພາບ ແລະ ປະສິດທິຜົນຢ່າງເຂັ້ມງວດ.

**ມາດຕາ 48 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ 15 ວັນເປັນຕົ້ນໄປ.

ຂໍ້ຕົກລົງສະບັບນີ້ປ່ຽນແທນ ຂໍ້ກຳນົດຂອງເຈົ້າແຂວງ ສະບັບເລກທີ 01/ຈຂ, ລົງວັນທີ 16 ມັງກອນ 2017 ວ່າດ້ວຍການຈັດງານ ແລະ ບຸນປະເພນີ ພາຍໃນແຂວງຫຼວງນ້ຳທາ.

ຂໍ້ກຳນົດ, ລະບຽບການໃດ ທີ່ຂັດກັບຂໍ້ຕົກລົງສະບັບນີ້ລ້ວນແລ້ວແຕ່ຖືກຍົກເລີກ.

ເຈົ້າແຂວງ

ແຂວງຫຼວງນ້ຳທາ
ເຈົ້າແຂວງ

ວຽງສະຫວັດ ສີພັນດອນ